# ເອເຊອີ (ເອຊາຢາ)

| | |
|---|---|
| ໃຈຄວາມສຳຄັນ | ຄວາມພົ້ນ |
| ຂໍ້ຄວາມສຳຄັນ | ບົດ – ໕໓ |
| ຈຳນວນບົດ | ໖໖ ບົດ |
| ເຣື່ອງເກີດຂຶ້ນໃນປີ | ໗໖໐ ຈົນເຖິງ ໗໐໐ ກ່ອນ ຄ.ສ. |
| ເຣື່ອງເກີດຂຶ້ນທີ່ | ເມືອງເຢຣູຊາເລັມ |
| ຈັກກະພັດທີ່ມີອຳນາດ | ອາຊີຣີ |
| ເອຊາອີ ແປວ່າ | ຄວາມພົ້ນຂອງພຣະເຢໂຮວາ |
| ເປັນຜູ້ທຳນວາຍກັບທີ່ | ໖ |

## ໑. ວ່າດ້ວຍປວັດຂອງເອຊາອີ

ເອຊາອີ ໄດ້ ເຂົ້າ ທຳນວາຍ ໃນປີ ກະສັດ ໂອເຊຍເຊ ສິ້ນ ພຣະ ຊົນ (ບົດ ໖) ໃນໂອກາດນັ້ນພຣະເຈົ້າຊົງໂຜດໃຫ້ເອຊາອີເຫັນນິມິດກ່ຽວກັບຄວາມບໍຣິສຸດຂອງພຣະເຈົ້າ (ບົດ ໖) ນິມິດໄດ້ເຮັດໃຫ້ເອຊາອີຕົກໃຈແລະຮູ້ຈັກຄວາມບໍຣິສຸດຂອງພຣະເຈົ້າຈົນເອຊາອີໄດ້ເອີ້ນພຣະເຈົ້າວ່າ "ຜູ້ບໍຣິສຸດຂອງຊາວອິສຣາເອັນ"

ເອຊາອີ ໄດ້ດຳເນີນຊີວິດຢູ່ດ້ວຍກັນກັບໂອເຊແລະມີເກ ພວກເຮົາເຄີຍເອີ້ນເອຊາອີວ່າ "ຜູ້ທຳນວາຍແລະຜູ້ປ່າວປະກາດຂ່າວປະເສີດ" ເພາະເພິ່ນເປັນຜູ້ທຳນວາຍແລະປ່າວປະກາດເຣື່ອງພຣະເມຊີອາຈະໃຫ້ອະໄພ

ບາບໂດຍແຈ່ມແຈ້ງ ເພິ່ນເປັນຜູ້ທຳນວາຍປະຈຳຢູ່ທີ່ພຣະຣາຊວັງແລະ ເພິ່ນໄດ້ມີລູກຊາຍສອງຄົນຄື ມາເຮີຊານ ອາບຣາຊາບາ ແປວ່າ "ຈົ່ງ ຝຸ້ນເອົາຊັບສົມບັດໂດຍໄວ" (໘:໓) ແລະອີກຜູ້ນຶ່ງຊື່ວ່າເຊເຣຢາຊຸບ ແປວ່າ "ພວກສ່ວນນ້ອຍຈະຫລົບຕັ້ງໃຈໃໝ່" (ບົດ ໗:໓)

ຕາມເຣື່ອງ ໃນປະວັດສາດກ່າວວ່າເອຊາອີ ໄດ້ຖືກຂົ່ມເຫັງຈົນ ໄປລີ້ ຕົວຢູ່ໃນໂກນໄມ້ແລ້ວກະສັດມານາເຊໄດ້ສັ່ງໃຫ້ເລື່ອຍກົກໄມ້ນັ້ນໃນຂະນະທີ່ ເອເຊອີຍັງລີ້ຢູ່ (ເຮັບເຣີ ໑໑:໓໗)

## ໒. ວ່າດ້ວຍຄຳນຳຂອງເອຊາອີ

ພວກເຮົາຖືວ່າຄຳທຳນວາຍຂອງເອຊາອີດີແລະແຈ່ມແຈ້ງກວ່າທຳ- ນວາຍຂອງທຸກຄົນ ເອຊາອີໄດ້ປະກາດຄວາມບໍລິສຸດຂອງພຣະເຈົ້າເຖິງ ໔໐ ເທື່ອ ຄືເພິ່ນໄດ້ປະກາດວ່າຄວາມບໍລິສຸດຂອງພຣະເຈົ້າປະກອບດ້ວຍ ຄວາມຮັກຄວາມຊອບທັມແລະຄວາມຈິງ ເພິ່ນຍັງປະກາດອີກວ່າຄົນຂອງ ພຣະເຈົ້າຈະຈິບຫາຍດ້ວຍບາບຂອງພວກເຂົາ ເພາະພວກເຂົາບໍ່ມີຄວາມ ສັດຊື່ ແຕ່ຄົນ ສ່ວນນ້ອຍ ທີ່ເຫລືອນັ້ນ ຈະພົ້ນ ດ້ວຍພຣະຄຸນ ຂອງ ພຣະເຈົ້າ ເພິ່ນໄດ້ທຳນວາຍເຖິງກະສັດຊີຣະເຊຢ່າງແຈ່ມແຈ້ງ (ບົດ ໔໕:໑) ວ່າພຣະ ເຈົ້າຈະຊົງໃຊ້ໃຫ້ຊ່ວຍເອົາພວກອິສຣາເອັນ (ເອເຊດຣາເຊ ບົດ ໑) ແລະ ຍັງປະກາດ ຢ່າງແຈ່ມແຈ້ງ ເຖິງເມຊີອາ ທີ່ເພິ່ນ ເຄີຍເອີ້ນ ວ່າຜູ້ຮັບໃຊ້ ຂອງພຣະເຢໂຮວາ.

## ໓. ວ່າດ້ວຍເຣື່ອງທີ່ມີຄວາມໝາຍ

໑. ລູກທັງສອງຂອງເອຊາອີ (໘:໑໘) ມີຄຳໝາຍກ່ຽວກັບ ຄຳທຳນວາຍຂອງເອຊາອີເອງ

໒. ສວນອາງຸ່ນຂອງພຣະເຢໂຮວາ (ບົດທີ ໕)
ສວນອາງຸ່ນປຽບເໝືອນຊົນອິສຣາເອັນ "ທ່ານຜູ້ອ້ານ້ອຍ ຣັກະລາຍ" ປຽບເໝືອນພຣະເຢຊູຜູ້ຈະທຳລາຍສວນນັ້ນ ເຣື່ອງນີ້ປຽບເຖິງພວກອິສຣາເອັນຜູ້ພຣະເຈົ້າຈະຖິ້ມ.

໓. ການສເວີຍຣາດໃນຄາວອັນສຸກ ບົດ ໑໑
ເຣື່ອງນີ້ໝາຍເຖິງການສເວີຍຣາດຂອງເມຊີອາ ທີ່ຈະມີມາໃນພາຍໜ້າ

## ໔. ວ່າດ້ວຍບົດສຳຄັນ

| | | |
|---|---|---|
| ບົດ | ໖ | ນິມິດກ່ຽວກັບຄວາມບໍຣິສຸດຂອງພຣະເຈົ້າ |
| ,, | ໑໘ | ບໍ່ແຕ່ງຄວາມລອດພົ້ນ |
| ,, | ໑໔ | ພຣະຍາມານມາຈາກໃສ |
| ,, | ໓໕ | ທາງທະເລຊາຍຈະມີດອກໄມ້ບານ |
| ,, | ໔໘ | ພວກຂ້າໃຊ້ຂອງພຣະເຢໂຮວາ |
| ,, | ໕໓ | ຄຳປະກາດກ່ຽວກັບໄມ້ກາງແຂນ |
| ,, | ໕໘ | ວ່າດ້ວຍຄວາມຮັກຂອງພຣະເຈົ້າ |
| ,, | ໕໕ | ຄຳຊັກຊວນໃຫ້ຮັບເອົາຄວາມພົ້ນ |

ບົດ ໕໘ ການຖືສິນອົດອາຫານອັນຖືກຕ້ອງ

„ ໖໑ ພວກຕ່າງປະເທດໄດ້ຮັບຄວາມລອດພົ້ນ

## ໕. ການແບ່ງເປັນພາກ

ພາກທີ ໑ ວ່າດ້ວຍຄຳທຳນວາຍ ບົດ ໑–໓໕

ບົດ ໑–໑໒ ຄຳທຳນວາຍເຖິງຢູດາແລະພວກອິສຣາເອັນ

ບົດ ໑໓–໒໓ ຄຳທຳນວາຍເຖິງຊາວຕ່າງປະເທດ

ບົດ ໒໔–໓໕ ຄຳປະກາດກ່ຽວກັບການລົງໂທດແລະການ ຊ່ອຍໃຫ້ພົ້ນ

ພາກທີ ໒ ເປັນເຣື່ອງປວັດສາດທີ່ກ່ຽວກັບກະສັດເອເຊເກັຍເຊ ກະສັດຊາວ ອາຊີຣີ ໄດ້ມາ ຕໍ່ສູ້ ອິງມັນແລະ ກະສັດເອເຊເກັຍເຊຍອມ (ບົດ ໓໖–໓໙)

ພາກທີ ໓ ເປັນຄຳທຳນວາຍຂອງ ເນຊີອາ (໔໐–໖໖)

ບົດ ໔໐–໔໘ ການກັບຄືນຈາກເນຣະເທດ

ບົດ ໔໙–໕໗ ວ່າດ້ວຍ ຂ້າໃຊ້ ຂອງ ພຣະເຢໂຮວາ ຜູ້ຈະ ຊ່ອຍໃຫ້ພົ້ນ

ບົດ ໕໘–໖໖ ຊ່ອງທາງ ທີ່ຈະ ຊົງ ໂຜດ ໃຫ້ ມີ ຄວາມສຸກ-ສຳຣານ